# ບົດທີ 13

## ຫຼັກຖານຂອງອານາຈັກພາກປາຍ

**1** ຈາກນີ້ເຮົາຈະຮຽນເລື່ອງຫຼັກຖານຂອງອານາຈັກຕໍ່ ໃນບົດກ່ອນເຮົາຮຽນມາແລ້ວເລື່ອງການອັດສະຈັນ 3 ຢ່າງທີ່ ສະແດງເຖິງອຳນາດຂອງພະອົງ. 3 ຢ່າງນັ້ນຄື:

ກ. ພະເຢຊູຊ່ອຍຄົນຂີ້ທູດຊ່ອຍຄົນໃຊ້ຂອງນາຍຮ້ອຍແລະໃຫ້ແມ່ເມຍຂອງເປໂຕຫາຍດີ. ສາມປະການນັ້ນສະ ແດງອຳນາດຂອງພະອົງເໜືອຫຍັງ? ______________________

ຂ. ພະເຢຊູສະແດງອຳນາດເໜືອຫຍັງເມື່ອພະອົງຫ້າມລົມແລະທະເລ? ____________

ຄ. ໃນເຂດແດນຊາວກາດາລາເຫັນພະອົງມີອຳນາດເໜືອຫຍັງ? __________________

<u>ພະເຢຊູ ຊົງໂຜດຄົນເປ້ຍ</u>

**2** ໃຫ້ທ່ານອ່ານ ມັດທາຍ 9:1-8 ເຊັ່ນດຽວກັນກັບເລື່ອງຜູ້ທີ່ມີຜີສິງ ມັດທາຍ ຫຍໍ້ຄວາມໃນເລື່ອງຄົນ ເປ້ຍນີ້ ສະເພາະ. ເຮົາຈະສຶກສາເລື່ອງນີ້ມີໃນຂ່າວປະເສີດມາລະໂກ. ໃຫ້ທ່ານອ່ານຈາກ ມາລະໂກ 2:1-4



ກ. ມີຈັກຄົນຫາມຄົນເປ້ຍມາຫາພະອົງ? __________________

ຂ. ເປັນຫຍັງເຂົາເຂົ້າທາງປະຕູບໍ່ໄດ້? ____________________

ຄ. ຜົນສຸດທ້າຍເຂົາເຂົ້າໄປທາງໃດ? __________________________________

**3** ການທີ່ເຂົາຈະຫາມຄົນເປ້ຍຂຶ້ນຫຼັງຄາເຮືອນແລ້ວຮື້ຫຼັງຄານັ້ນອອກກໍ່ບໍ່ເປັນການງ່າຍດອກ. ແມ່ນເພາະເຫດໃດທີ່ ເຂົາເອົາໃຈໃສ່ປານນັ້ນ? ____________________________

**4** ໃນມາລະໂກ 2:5 ພະເຢຊູ ເວົ້າຫຍັງຕໍ່ເພິ່ນ? (ຕື່ມຄວາມທີ່ຂາດ)

"ລູກເອີຍ ______________ ຂອງເຈົ້າໄດ້ຮັບ ____________________ ແລ້ວ"

**5** ໃຫ້ອ່ານຂໍ້ 5 ນັ້ນອີກ ພະເຢຊູ ເຫັນຫຍັງຈຶ່ງກ່າວຄວາມນັ້ນໃຫ້ຄົນເປ້ຍ? ____________

**6** ສິ່ງທີ່ເຂົາຕ້ອງການຄື: ຈະໃຫ້ຄົນເປ້ຍດີປົກະຕິ ແຕ່ເຫັນວ່າ ພະເຢຊູ ຍົກຜິດບາບເສຍກ່ອນແທນທີ່ຈະໃຫ້ອາການ ເປ້ຍຫາຍດີກ່ອນ.

ພະເຢຊູ ເຫັນຄວາມເຊື່ອຂອງພວກເຂົາກ່ອນເລີຍເຮັດຫຍັງ? (ເລືອກ)

ກ. ໂຜດໃຫ້ປົກກະຕິກ່ອນ.

ຂ. ບອກໃຫ້ເຂົາກັບໄປບ້ານ.

ຄ. ຍົກຜິດບາບຄົນເປ້ຍກ່ອນ.

**7** ໃນສາຍຕາຂອງ ພະເຢຊູ ອັນໃດສຳຄັນທີ່ສຸດ? (ເລືອກ)

ກ. ການປົວຮ່າງກາຍໃຫ້ດີ.

ຂ. ການຍົກຜິດບາບ.

ຄ. ປົດປ່ອຍຈາກການກົດຂີ່ຂົ່ມເຫັງດ້ານການເມືອງ.

**8** ດັ່ງນັ້ນຖ້າວ່າເຮົາຈະເຮັດຕາມຕົວຢ່າງຂອງພະເຢຊູ ອັນໃດສຳຄັນກວ່າ? (ເລືອກ)

ກ. ສຸຂະພາບ.

ຂ. ຄວາມເສລີພາບ.

ຄ. ການຍົກໂທດຄວາມຜິດບາບ.

**9** ຜົນສຸດທ້າຍພະເຢຊູໃຫ້ຄົນເປ້ຍນັ້ນດີປົກກະຕິຂຶ້ນມາບໍ່? (ອ່ານ ມາລະໂກ 2:11-12)

______________________________________________________________

**10** ແນ່ນອນວ່າ ພະເຢຊູ ຊ່ອຍເພິ່ນແລ້ວ! ບັນຫາດ້ານຮ່າງກາຍສຳຄັນຢູ່ ຊຶ່ງຄຣິດສະຕຽນຄົນໃດກໍ່ຕາມ ສົມຄວນທີ່ຈະ ຊ່ອຍຄົນເຈັບແລະຄົນເສຍອົງຄະ. ບັນຫາດ້ານການກົດຂີ່ຂົ່ມເຫັງກໍ່ສຳຄັນຢູ່ ບັນຫາດ້ານສຸຂະພາບກໍ່ສຳຄັນຢູ່ ແຕ່ສິ່ງສຳຄັນທີ່ສຸດ ທີ່ເກີດໃຫ້ມີຄວາມຍາກຈົນທຸກປະການຄືບັນຫາໃດ? ______________________________________________

**11** ກ. ແມ່ນພວກໃດທີ່ບໍ່ດີໃຈຟັງຄຳຍົກຜິດບາບຈາກ ພະເຢຊູ ນັ້ນ? (ອ່ານ ມາລະໂກ 2:6-7)

______________________________________________________________

ຂ. ເຂົາວ່າມີແຕ່ຜູ້ໃດຈະຍົກຜິດບາບໄດ້? ______________________________

**12** ຄວາມຄິດຂອງພວກນັກທຳຖືກຕ້ອງຢູ່ ໃນເລື່ອງນີ້ທັງພະຄຳພີແລະສາສະໜາຢິວທັງຄຣິດສະຕຽນເວົ້າແຕ່ຄວາມ ດຽວວ່າ *ມີແຕ່ ພະເຈົ້າ ຈະຍົກຜິດບາບໄດ້* ສະເພາະເມື່ອ ພະເຢຊູ ຍົກຜິດບາບຂອງຄົນເປ້ຍນັ້ນ ພະເຢຊູ ບອກຕົວເອງໃຫ້ເຂົາຮູ້ວ່າເປັນໃຜ? ________________

**13** ພະເຢຊູ ເຂົ້າໃຈຄວາມໝາຍນັ້ນພວກນັກທຳເຂົ້າໃຈເຊັ່ນດຽວກັນເຂົາຈຶ່ງຫາວ່າຄວາມທີ່ ພະເຢຊູ ເວົ້ານັ້ນວ່າ ເປັນການໃດ? ________________________________

**14** ການໝິ່ນປະມາດພະເຈົ້ານັ້ນຄືການເວົ້າກ່ຽວກັບ ພະເຈົ້າດ້ວຍບໍ່ນັບຖືພ້ອມ. ຄັນເຮົາຖືວ່າມີແຕ່ພະເຈົ້າອົງດຽວທີ່ ຍົກຜິດບາບໄດ້ ຖ້າມະນຸດໃດທີ່ຈະອ້າງຕົວວ່າຍົກຜິດໄດ້ ຖືວ່າຄົນນັ້ນໝິ່ນປະມາດ. ພະເຢຊູ ເວົ້າຄວາມນັ້ນດ້ວຍຄວາມຈິງເພາະພະອົງຊົງເປັນ ພະເຈົ້າພວກນັກທຳບໍ່ເຊື່ອວ່າພະເຢຊູ ເປັນພະເຈົ້າຈຶ່ງຫາວ່າໝິ່ນປະມາດພະເຈົ້າ. ດັ່ງນັ້ນມີແຕ່ທາງສອງເສັ້ນຄື:

- ຫຼື ພະເຢຊູ ເປັນ ພະເຈົ້າ ທີ່ມີສິດຍົກຜິດບາບໄດ້.
- ຫຼື ບໍ່ເປັນ ພະເຈົ້າເລີຍບໍ່ມີສິດຈຶ່ງຖືວ່າໝິ່ນປະມາດ.

ໃຫ້ອ່ານ ມາລະໂກ 2:10-12 ດີ ໆ ແລ້ວໃຫ້ເລືອກຂໍ້ໃດທີ່ຖືກ.

ກ. ພະເຢຊູ ເປັນ ພະເຈົ້າ ຈຶ່ງມີສິດຍົກຜິດບາບ.

ຂ. ພະເຢຊູ ບໍ່ແມ່ນ ພະເຈົ້າ ຈຶ່ງເວົ້າຄວາມໝິ່ນປະ ມາດ.

ຄ. ພວກນັກທຳຟັງບໍ່ເຂົ້າໃຈ.

**15** ໃນຂໍ້ 10-11 ພະເຢຊູເຮັດຢ່າງໃດສະແດງວ່າມີສິດອຳນາດຂອງ ພະເຈົ້າ? __________

**16** ໝາຍຄວາມວ່າພະເຢຊູ ໃຊ້ການອັດສະຈັນນີ້ເປັນປະໂຫຍດສອງປະການຄື: ໃຫ້ຄົນເປ້ຍດີຂຶ້ນມາແລະອີກໃຫ້ຄົນ ເຫັນວ່າ ພະເຢຊູ ມີລິດອຳນາດໃດ? ________________________

**17** ເຫດການນັ້ນສະແດງລັກສະນະຂອງພະເຢຊູຝ່າຍໃດ? __________________________

**18** ດັ່ງນັ້ນ ພະເຢຊູໂຜດໃຫ້ຄົນເປ້ຍດີປົກກະຕິຂຶ້ນມາທັນທີຕໍ່ໜ້າປະຊາຊົນທັງພວກນັກທຳ ພ້ອມເພື່ອສະແດງສິດອຳ ນາດເໜືອ __________ ແລະມີສິດຍົກ __________ ດ້ວຍ. (ຕື່ມຄວາມທີ່ຂາດ)

**19** ມາເຖິງນີ້ມີຫຼັກຖານຂອງອານາຈັກທີ່ສອນມາແລ້ວເຖິງ 4 ປະການຄື: (ຕື່ມຄວາມທີ່ຂາດ)

ກ. ພະເຢຊູ ມີອຳນາດ ________________________________________ ພະຍາດ.

ຂ. ພະເຢຊູ ມີອຳນາດເໜືອດິນ ________________________________________

ຄ. ພະເຢຊູ ມີອຳນາດຂັບໄລ່________________________________________ ອອກ.

ງ. ພະເຢຊູ ມີອຳນາດອະໄພຄວາມ ________________________________________

*(ເຮົາຈະຂ້າມ ມັດທາຍ 9:9-17 ເອົາໄວ້ພາກຕໍ່ໄປ)*

<u>ລູກສາວເຈົ້ານາຍແລະຍິງເລືອດຕົກ</u>

**20** ໃຫ້ອ່ານ ມັດທາຍ 9:18-26 ຕອນພະຄຳພີນີ້ບັນທຶກເລື່ອງການອັດສະຈັນສອງປະການ. ເຮົາຈະຍົກເລື່ອງເທື່ອ ລະຢ່າງແລະຈະເອົາເລື່ອງຍິງເລືອດຕົກມາກ່ອນ.

ໃຫ້ທ່ານໃຊ້ວິທີປຽບທຽບເພື່ອຈະຮູ້ລາຍລະອຽດກ່ຽວກັບເຫດການນີ້.

ໃຫ້ອ່ານມາລະໂກ 5:30-31 (ແລ້ວຕື່ມຄວາມທີ່ຂາດ.)

ກ. ພະເຢຊູ ຖາມ "ແມ່ນໃຜໄດ້ ______________ເສື້ອຂອງ ______________ ?"

ຂ. ພວກສິດຕອບວ່າ "ທ່ານເຫັນແລ້ວວ່າປະຊາຊົນກຳລັງ ______________ ທ່ານຢູ່ແລະຍັງຈະຖາມ ອີກຫຼືວ່າ 'ໃຜໄດ້ບາຍເຮົາ'"

**21** ພະເຢຊູໄປບ່ອນໃດກໍ່ຕາມມີຝູງຊົນຫຼາຍຄົນຕິດຕາມພະອົງໄປມີທັງຜູ້ໃຫຍ່ໃນສາລະໜາຢິວມາຂາບລົງຕໍ່ ພະເຢ ຊູ ໃນມາລະໂກ 5:22 ປະຊາຊົນມາບຽດພະອົງທຸກດ້ານຕ້ອງແມ່ນວ່າມີຫຼາຍຄົນທີ່ແຕະຕ້ອງພະອົງແຕ່ຄົນທັງປວງເຫຼົ່ານັ້ນໄດ້ຮັບພະພອນສະເພາະບໍ? _______

**22** ແຕ່ມີຜູ້ຍິງຜູ້ໜຶ່ງທີ່ໄດ້ຮັບພະພອນຫຼາຍດ້ວຍເພາະນາງຕັ້ງໃຈບາຍເສື້ອຂອງພະອົງດ້ວຍຫຍັງ? (ອ່ານ ມາລະໂກ 5:34) ________________________________________

**23** ຂໍໃຫ້ທ່ານຍົກມາລະໂກ 5:34 ນັ້ນມາປຽບກັບອີກຄົນໜຶ່ງໃນມາລະໂກ 5:2 ທັງສອງຄົນນັ້ນມາຫາ ພະເຢ ຊູດ້ວຍມີຄວາມຫຍັງ? ________________________________________

**24** ໃນທຸກມື້ນີ້ມີຫຼາຍຄົນທີ່ຮຽນຮູ້ເລື່ອງພະເຢຊູແຕ່ເຂົາບໍ່ໄດ້ຮັບພະພອນປານໃດເຂົາອາດຈະໄປ ປະຊຸມຢູ່ແລະອາດ ຈະຟັງຂ່າວປະເສີດທາງວິທະຍຸດ້ວຍ. ແຕ່ບໍ່ເຫັນເຂົາຮັບພະພອນຈາກ ພະເຈົ້າປານໃດເຊັ່ນດຽວກັບຜູ້ຍິງນັ້ນຖ້າວ່າພຽງແຕ່ຢູ່ໃກ້ພະເຢຊູ ຫຼື ໃກ້ພວກຄຼິດສະຕຽນບໍ່ມີ ປະໂຫຍດນອກຈາກຈະມີສິ່ງໃດເພື່ອເຮົາຈະໄດ້ຮັບພະພອນ? ____________________

**25** ຜູ້ຍິງນັ້ນຮູ້ຢູ່ແລ້ວວ່າເລືອດເຊົາຕົກແລ້ວແຕ່ ພະເຢຊູບໍ່ຟ້າວໃຫ້ໜີໄປເທື່ອ. ໃນຂໍ້ 33-34 ຜູ້ຍິງ ຄົນນັ້ນຢາກ ຮັບພະພອນຢ່າງລັບໆແຕ່ພະເຢຊູຕ້ອງການໃຫ້ເປັນຢ່າງໃດ? (ເລືອກ)

ກ. ຢາກໃຫ້ເປີດເຜີຍ.

ຂ. ຢາກໃຫ້ເສຍລາຄາໃຫ້.

ຄ. ຢາກໃຫ້ຍິງນັ້ນລ້າງຕີນພະອົງ.

**26** ເລື່ອງນີ້ເປັນບົດຮຽນໃຫ້ພວກເຮົາດ້ວຍພວກເຮົາໄດ້ຮັບພະພອນຈາກພະອົງຫຼາຍປະການ ແລ້ວ ພະອົງຈະໃຫ້ເຮົາ ຕອບບຸນແທນຄຸນຂອງພະອົງຢ່າງໃດ? (ເລືອກ)

ກ. ຢາກໃຫ້ເຮົາເປັນພິຍານເປີດເຜີຍ.

ຂ. ຢາກໃຫ້ເຮົາເຮັດບຸນ.

ຄ. ຢາກໃຫ້ເຮົາຂາຍໜ້າ.

**27** ກ. ເປັນຫຍັງຫຼາຍຄົນບຽດພະອົງແຕ່ແມ່ນຜູ້ດຽວນີ້ເຊິ່ງບາຍ ເສື້ອຂອງພະອົງທີ່ໄດ້ຮັບພະພອນ ສະເພາະ? ____________________________________________

ຂ. ຫຼັງຈາກຍິງນັ້ນຮັບພະພອນແລ້ວພະອົງຕ້ອງການຫຍັງ? ______________________

*ບາດນີ້ເຮົາຈະຮຽນເລື່ອງເຫດການອີກປະການໜຶ່ງໃນ ມທ 9:18-26 ໃຫ້ທ່ານເບິ່ງຂໍ້ອ້າງໃນວົງ ເລັບລຸ່ມຫົວຂໍ້. ຖ້າວ່າພົບແລ້ວໃນຂ່າວປະເສີດມັດທາຍແລະຂ່າວປະເສີດລູກາໃຫ້ທ່ານຈົກເຈ້ຍ 3 ອັນຂັ້ນໃສ່ໜ້າເຫຼົ່ານັ້ນໄວ້ ເພື່ອຕໍ່ໄປຈະຫາໄດ້ງ່າຍ.*

<u>ລູກສາວຂອງເຈົ້ານາຍ</u>

**28** ໃນການບັນທຶກຂ່າວປະເສີດ 3 ເຫຼັ້ມແລກນັ້ນກໍ່ຮູ້ສຶກວ່າແຕ່ລະເຫຼັ້ມບັນທຶກໄປຄົນລະແບບກ່ຽວ ກັບເລື່ອງເຂົາ ລາຍງານວ່າລູກສາວນັ້ນຕາຍ.

ກ. ແມ່ນໃນຂ່າວປະເສີດເຫຼັ້ມໃດເບິ່ງຄືວ່າເຈົ້ານາຍເອງໄດ້ບອກ ພະເຢຊູ ວ່າລູກສາວຕາຍ ແລ້ວກ່ອນຈະພົບຍິງ ເລືອດຕົກ? ______________________________

ຂ. ແມ່ນໃນຂ່າວປະເສີດເຫຼັ້ມໃດທີ່ບອກລາຍລະອຽດວ່າຄົນມາລາຍງານເລື່ອງລູກສາວຕາຍ ຫຼັງຈາກຍິງເລືອດ ຕົກດີມາແລ້ວ? ______________________________

**29** ການນີ້ເປັນການຂັດແຍ່ງຫຼື ເປັນແຕ່ມັດທາຍຫຍໍ້ເລື່ອງ? (ບໍ່ຕ້ອງຕອບເທື່ອ)

ກ. ໃນຂ່າວປະເສີດ 3 ເຫຼັ້ມແລກນັ້ນແມ່ນເຫຼັ້ມໃດລາຍງານເຫດການນີ້ໂດຍໃຊ້ 11 ຂໍ້? ___

ຂ. ອັນໃດໃຊ້ 13 ຂໍ້? ____________________________________________

ຄ. ເຫຼັ້ມໃດເຮັດໃຫ້ສັ້ນເຂົ້າຍັງແຕ່ 6 ຂໍ້? ______________________________

ງ. ດັ່ງນັ້ນຈະແມ່ນແຕ່ມັດທາຍເວົ້າຄວາມຂັດແຍ່ງ ຫຼື ຫຍໍ້ເລື່ອງໄວ້? ________________

**30** ກ. ຖ້າເຮົາຈະຮຽນຢ່າງລະອຽດດີ ເຮົາຈະຮຽນທາງຂ່າວປະເສີດເຫຼັ້ມໃດແດ່? ___________

ຂ. ດັ່ງນັ້ນຕາມຜູ້ທີ່ບັນທຶກລະອຽດພະເຢຊູ ໄດ້ຮັບຂ່າວວ່າລູກສາວນັ້ນຕາຍກ່ອນຈະພົບຍິງເລືອດຕົກ ຫຼື ທີຫຼັງ? ________________________________________________

**31** ເມື່ອພະເຢຊູໄປເຖິງເຮືອນຂອງເຈົ້ານາຍນັ້ນພະອົງບອກເຂົາວ່າເດັກນັ້ນເປັນຢ່າງໃດ?

_________________________________________________________________

**32** ກ. ເປັນຕາງຶດທີ່ ພະເຢຊູເວົ້າຄວາມນັ້ນເນາະ! ແຕ່ໃນຂ່າວປະເສີດ ໂຢຮັນ 11:11 ພະອົງວ່າລາຊາໂລ ເປັນຢ່າງ ໃດ? ________________________________________

ຂ. ແຕ່ຕໍ່ໄປໃນຂໍ້ 13 ປາກົດວ່າພະເຢຊູເວົ້າເຖິງຫຍັງແທ້? _________________________

ຄ. ຕໍ່ໄປອີກໜ້ອຍໜຶ່ງພະເຢຊູ ເຮັດຫຍັງໃນ ໂຢຮັນ 11:43-44? __________________

**33** ທີ່ພະເຢຊູບອກວ່າລາຊາໂລຫຼັບແລ້ວທີ່ຈິງແມ່ນລາຊາໂລຕາຍແລ້ວແຕ່ພະເຢຊູ ຮູ້ຢູ່ແລ້ວວ່າອີກໜ້ອຍດຽວພະ ອົງຈະຍົກໃຫ້ຄືນມາອີກ. ເຊັ່ນດຽວກັນກັບລູກສາວເຈົ້ານາຍນັ້ນພະເຢຊູ ວ່າ "ຫຼັບຢູ່" ພະອົງຮູ້ວ່າ _______ ແລ້ວແຕ່ອີກໜ້ອຍໜຶ່ງພະອົງຈະໃຫ້ _______ ມາຈາກຕາຍ. (ຕື່ມຄວາມທີ່ຂາດ)



**34** ໃນການບັນທຶກເລື່ອງລູກສາວເຈົ້ານາຍທີ່ຄືນມາຈາກຕາຍ, ມີເຫຼັ້ມໜຶ່ງ ທີ່ລາຍງານຕ່າງກັບເຫຼັ້ມ ອື່ນໜ້ອຍໜຶ່ງເພາະເຫດໃດ? (ເລືອກ)

ກ. ຂັດແຍ່ງກັນ. ຂ. ເວົ້າຄືນລະເລື່ອງ ຄ. ຫຍໍ້ໄວ້.

**35** ກ. ໃນ ມາລະໂກ 5:43 ພະເຢຊູ ຫ້າມຫຍັງ? ___________________________________

ຂ. ພະອົງສັ່ງເຂົາເອົາຫຍັງໃຫ້ແກ່ເດັກ? _______________________________________

**36** ອາດຈະແມ່ນເພາະເຫດໃດທີ່ ພະເຢຊູສັ່ງໃຫ້ເຂົາເອົາເຂົ້າໃຫ້ກິນ? [ພະຄຳພີບໍ່ບອກແຕ່ໃຫ້ເຮົາກະເບິ່ງ] (ເລືອກ)

ກ. ເຈັບໜັກປານນັ້ນມາແລ້ວທຳມະດາເດັກນັ້ນຈະຕ້ອງຢາກເຂົ້າ.

ຂ. ພະເຢຊູ ມີອຳນາດໃຫ້ຄືນມາຈາກຕາຍແຕ່ບໍ່ມີອຳນາດລ້ຽງເຂົ້າ.

ຄ. ພໍ່ແມ່ອາດຈະວຸ້ນວາຍຫຼາຍຈຶ່ງລືມແຕ່ງອາຫານໃຫ້.

ງ. ພະເຢຊູໃຊ້ອຳນາດຂອງ ພະເຈົ້າຍົກເດັກໃຫ້ຄືນຂຶ້ນມາຈາກຕາຍແຕ່ພໍ່ແມ່ສາມາດຈະລ້ຽງໃຫ້ມີເຂົ້າກິນໄດ້.

ຈ. ພະເຢຊູ ຫວັງວ່າເຂົາຈະແຕ່ງອາຫານໃຫ້ພະອົງກິນດ້ວຍເພື່ອຈະເປັນການຕອບແທນບຸນຄຸນຂອງພະອົງ.

**37** ການອັດສະຈັນນີ້ສະແດງຫຼັກຖານວ່າອານາຈັກສະຫວັນມາແລ້ວຄື: ມີແຕ່ ພະເຈົ້າຈະ ____ ຜິດ ບາບໄດ້ເຊັ່ນດຽວກັນແມ່ນແຕ່ພະເຈົ້າຈະ ____ ຄົນໃຫ້ຄືນຂຶ້ນມາຈາກຕາຍດ້ວຍ. (ຕື່ມ)

**38** ມາເຖິງນີ້ເຮົາໄດ້ຮຽນຮູ້ແລ້ວເລື່ອງຫຼັກຖານຫຼາຍປະການວ່າອານາຈັກມາດ້ວຍພະເຢຊູເພາະເຫັນວ່າພະອົງມີ ອຳນາດດັ່ງຕໍ່ລົງໄປນີ້ຄື: (ຕື່ມຄວາມທີ່ຂາດ)

ກ. ມີອຳນາດໃຫ້ຄົນມີ __________ ດີປົກກະຕິໄດ້.

ຂ. ມີອຳນາດເໜືອ __________ ຈຶ່ງຫ້າມລົມແລະທະເລໄດ້.

ຄ. ມີອຳນາດໄລ່ __________ ໃຫ້ອອກ.

ງ. ມີອຳນາດຍົກໂທດ __________ ໄດ້.

ຈ. ໃນເລື່ອງກ່ຽວກັບລູກສາວເຈົ້ານາຍນັ້ນເຫັນວ່າພະເຢຊູ ມີອຳນາດຍົກຄົນໃຫ້ຄືນຂຶ້ນມາ ___ <u>ຊຶ່ງໂຜດຄົນຕາບອດສອງຄົນ</u>

**39** ໃຫ້ອ່ານ ມັດທາຍ 9:27-31 ຄົນຕາບອດສອງຄົນນັ້ນ ເອີ້ນພະເຢຊູວ່າເປັນບຸດຂອງໃຜ?

______________________________________________________________

**40** ເພື່ອຈະເຂົ້າໃຈເນື້ອຄວາມ "ບຸດດາວິດ" ນັ້ນ ໃຫ້ອ່ານຈາກ ລູກາ 20:41

ກ. ຄົນຢິວສະໄໝນັ້ນເຄີຍໃຊ້ຊື່ "ບຸດດາວິດ" ນັ້ນແທນຫຍັງ? ____________________

ຂ. ຄຳນັ້ນໃນພາສາເຮັບເລີວ່າຢ່າງໃດ? ____________________________________

ຄ. ໃນພາສາລາວມີຄວາມໝາຍວ່າຢ່າງໃດ? ________________________________

**41** ຕາມຄຳທຳນວາຍໃນພະຄຳພີເດີມພະເຢຊູເກີດໃນເບັດເລເຮັມເຊິ່ງເປັນເມືອງຂອງກະສັດໃດ?

______________________________________________________________

**42** ເມື່ອຄົນຕາບອດສອງຄົນຮ້ອງພະອົງວ່າ "ບຸດດາວິດ" ເຂົາອ້າງເຖິງຫຍັງ? (ເລືອກ)

ກ. ເກີດໃນເບັດເລເຮັມ.

ຂ. ພະເຢຊູ ເປັນກະສັດດາວິດເກີດຊາດໃໝ່.

ຄ. ພະເຢຊູ ເປັນ ພະເມຊີອາ (ພະຄຼິດ)

ງ. ພະເຢຊູ ເບິ່ງຄືກະສັດ ດາວິດ

**43** ດັ່ງນີ້ຄົນຕາບອດສອງຄົນນັ້ນຮັບຮູ້ວ່າພະເຢຊູ ຄື ພະເມຊີອາທີ່ທຳນວາຍໄວ້ໃນພະຄຳພີເດີມ. ໃນບົດ 8 ແລະ 9 ນີ້ເຮົາໄດ້ເຫັນຫຼັກຖານເລື່ອງອຳນາດຂອງພະອົງເໜືອສິ່ງດັ່ງຕໍ່ໄປນີ້: (ຕື່ມຄວາມທີ່ຂາດຂ້າງລຸ່ມ)

ກ. ພະ __________________________ ຂ. ດິນ ________________________

ຄ. ພວກ ________________________ ງ. ຍົກໂທດ _____________________

ຈ. ຄວາມ _______________________

**44** ພະອົງຫ້າມເຂົາຢ່າງແຂງແຮງຢ່າງໃດໃນ ມທ 9:30? _________________________

**45** ເປັນຕາປະຫຼາດໃຈແທ້ເນາະ! ພະເຢຊູ ບໍ່ຢາກໃຫ້ໃຜຮູ້ ທີ່ຈິງ ພະເຢຊູ ຫ້າມຢ່າງນັ້ນຫຼາຍເທື່ອ. ໃນຂໍ້ໃດ ຕໍ່ໄປນີ້ ທີ່ ພະເຢຊູຫ້າມບໍ່ຢາກໃຫ້ເຂົາບອກເລື່ອງພະພອນທີ່ພະອົງຊ່ວຍເຂົາ? ໃຫ້ໝາຍ ໃສ່ຂໍ້ໃດທີ່ມີຄຳຫ້າມດັ່ງນັ້ນ.

_______ມທ 12:16 _______ມາລະໂກ 7:36

_______ມາລະໂກ 1:44 _______ມາລະໂກ 8:26

_______ມາລະໂກ 5:19 _______ໂຢຮັນ 5:14

**46** ຕໍ່ໄປນີ້ມີຫຼາຍເທື່ອທີ່ຫຼາຍຄົນມາຮ່ວມທີ່ຈະເບິ່ງພະອົງ ເພາະຢາກເຫັນສິ່ງທີ່ໜ້າຕື່ນເຕັ້ນ. ຖ້າແມ່ນວ່າຫຼາຍຄົນ ຈະມາເບິ່ງລ້າ ໆ ເໝືອນຈະມາເບິ່ງການສະແດງກໍ່ເລີຍບໍ່ມີປະໂຫຍດຫຍັງ. ໃຫ້ທ່ານອ່ານຕອນພະຄຳພີຕໍ່ໄປນີ້ ແລ້ວເອົາຫົວຂໍ້ມາຈັບຄູ່ກັບປະໂຫຍກທີ່ຢູ່ຂ້າງຂວາໃຫ້ຖືກ.

1. ມທ 8:33-34 ກ. ______ພະເຢຊູ ຈຳເປັນຕ້ອງໜີຈາກຝູງຊົນທີ່ຢາກຕັ້ງພະອົງໄວ້ເປັນກະສັດ.
2. ມາລະໂກ 1:44-45 ຂ. ______ ພະອົງເອົາຄົນພະຍາດໄປຢູ່ນອກເມືອງຈຶ່ງປິ່ນປົວໃຫ້ດີປົກກະຕິ.
3. ມາລະໂກ 8:23 ຄ. ______ເລື່ອງພະອົງຊ່າລືໄປຈົນພະອົງເຂົ້າໄປໃນເມືອງບໍ່ໄດ້ ຈຶ່ງໄປຢູ່ນອກເມືອງ
4. ມາລະໂກ 9:30-31 ງ. ______ພະອົງສອນສາວົກແຕ່ບໍ່ຢາກໃຫ້ໃຜຮູ້.
5. ໂຢຮັນ 6:14-15 ຈ. ______ຄົນໃນເມືອງນັ້ນອ້ອນວອນໃຫ້ພະອົງອອກໄປຈາກເຂດແດນຂອງເຂົາ.

**47** ແນ່ນອນ ພະເຢຊູຢາກປ່າວປະກາດເລື່ອງອານາຈັກສະຫວັນໃຫ້ຄົນຟັງ ແຕ່ສ່ວນຄົນທີ່ຢາກຮູ້ຢາກເຫັນເພື່ອພໍໃຈ ຕົວເອງລ້າ ໆ ພະອົງບໍ່ຢາກດຶງດູດໃຫ້ເຂົາມາດ້ວຍບໍ່ມີເຫດ. ພະອົງຢາກປະກາດແລະສັ່ງສອນພວກໃດ? (ເລືອກ)

ກ. ຄົນທີ່ຊອກຫາຄວາມຈິງ.

ຂ. ສາວົກ.

ຄ. ຄົນຢາກຮູ້ຢາກເຫັນ ຊື່ ໆ

**48** ກ. ເມື່ອຄົນຕາບອດເອີ້ນ ພະເຢຊູ ວ່າ "ບຸດດາວິດ" ເຂົາສະແດງຄວາມເຊື່ອຖືວ່າ ພະເຢຊູ ຄືໃຜ? ____________________________________________

ຂ. ແມ່ນເພາະເຫດໃດທີ່ບາງເທື່ອພະເຢຊູຫ້າມບໍ່ໃຫ້ຄົນບອກເລື່ອງອັດສະຈັນທີ່ພະອົງກະທຳ?

____________________________________________

<u>ຊີງໂຜດຄົນປາກກືກ</u>

**49** ຍັງມີອີກປະການໜຶ່ງໃນ ມທ 9:32-34 ໃຫ້ທ່ານອ່ານຕອນນັ້ນແລະປຽບທຽບເອົາກັບ ມທ 12:22-24

ກ. ແມ່ນເພາະເຫດໃດທີ່ຄົນໜຶ່ງປາກກືກແລະອີກຄົນໜຶ່ງທັງຕາບອດແລ້ວປາກກືກພ້ອມ?

__________________________________________________

ຂ. ໃນເຫດການທັງສອງປະການນັ້ນ ພວກຟາລິຊາຍຫາຄວາມວ່າ ພະເຢຊູ ໄລ່ຜີອອກດ້ວຍອໍານາດໃດ? ________________________________________

*ພວກຟາລິຊາຍກ່າວຫາພະເຢຊູຢ່າງໜັກແທ້! ແຕ່ເລື່ອງນັ້ນເຮົາຈະບໍ່ຟ້າວຮຽນເທື່ອ. ຈະເອົາໄວ້ຈົນກວ່າຈະຮຽນເລື່ອງສະເພາະສາສະໜາທີ່ມາຕໍ່ຕ້ານພະເຢຊູ.*

*ມາເຖິງປານນີ້ ເຮົາໄດ້ສຶກສາເລື່ອງການອັດສະຈັນຂອງພະເຢຊູຫຼາຍປະການ. ຫວັງວ່າຄວາມເຊື່ອຂອງທ່ານຈະໝັ້ນຄົງກວ່າແຕ່ກ່ອນ. ພະເຢຊູບໍ່ປ່ຽນແປງຈັກເທື່ອແລະຍັງຈະຊ່ອຍເຮົາເຊັ່ນ ດຽວກັນ.*

*ມີແຕ່ບາງຄົນທີ່ບໍ່ເຊື່ອໃນການອັດສະຈັນເຫຼົ່ານັ້ນຈັກເທື່ອ ເຂົາເຊື່ອແຕ່ໃນວິທະຍາສາດຢ່າງດຽວເຂົາວ່າວິທະຍາສາດພິສູດຕາຍຕົວວ່າບໍ່ມີການອັດສະຈັນຈັກເທື່ອ. ໃນບົດຕໍ່ໄປນີ້ເຮົາຈະຮຽນເລື່ອງການຕໍ່ຕ້ານການອັດສະຈັນໃນພະຄໍາພີ ຢ່າງນັ້ນ.*

**50** ກ່ອນເຮົາຈະເລີກຮຽນບົດຮຽນນີ້ໃຫ້ຮຽນຄືນອີກໜ້ອຍດຽວ ໃນ ມັດທາຍ ບົດ 8 ແລະ 9 ເຮົາເຫັນວ່າ ພະເຢຊູ ມີ ອໍານາດເໜືອ 5 ປະການໃດ?

_________________________ _________________________

_________________________ _________________________

_________________________

*ຢ່າລືມຕອບບົດເສັງໂລດ!*

**ຄໍາຕອບ:**

**1** *ກ. ພະຍາດ. ຂ. ດິນຟ້າອາກາດ (ທໍາມະຊາດກໍ່ໄດ້) ຄ. ຜີ*

**2** *ກ. 4 ຂ. ເພາະຄົນຫຼາຍ ຄ. ຣີ້ຫຼັງຄາ.*

**3** *ເຂົາເຊື່ອວ່າ ພະເຢຊູ ຕ້ອງໂຜດໃຫ້ເພື່ອນຫາຍດີປົກກະຕິ.*

**4** *ຜິດບາບ...ອະໄພ*

**5** *ເຫັນຄວາມເຊື່ອ.*

**6** *ຄ. ຖືກ*

**7** *ຂ. ຖືກ*

**8** *ຄ. ຖືກ*

**ຄຳຕອບ (ຕໍ່):**

**9** *ໃຫ້ດີປົກກະຕິ.*

**10** *ຜິດບາບ*

**11** *ກ. ພວກບັກທຳ.   ຂ. ມີແຕ່ ພະເຈົ້າ.*

**12** *ພະເຈົ້າ*

**13** *ໝິ່ນປະມາດ*

**14** *ກ. ຖືກ*

**15** *ໃຫ້ຄືນເປັນດີປົກກະຕິ*

**16** *ຂອງ ພະເຈົ້າ.*

**17** *ພະເຈົ້າ.*

**18** *ພະຍາດ...ຜິດບາບ*

**19** *ກ. ເໜືອ (ປິ່ນປົວກໍ່ໄດ້)   ຂ. ຟ້າອາກາດ   ຄ. ຜີ   ງ. ຜິດບາບ.*

**20** *ກ. ບາຍ...ເຮົາ   ຂ. ບຽດ.*

**21** *ບໍ່*

**22** *ຄວາມເຊື່ອ.*

**23** *ຄວາມເຊື່ອ.*

**24** *ຄວາມເຊື່ອ.*

**25** *ກ. ຖືກ*

**26** *ກ. ຖືກ*

**27** *ກ. ດ້ວຍຄວາມເຊື່ອ.   ຂ. ໃຫ້ເປີດເຜີຍ.*

**28** *ກ. ມັດທາຍ.   ຂ. ມາລະໂກ ແລະ ລູກາ.*

**29** *ກ. ລູກາ.   ຂ. ມາລະໂກ.   ຄ. ມັດທາຍ.   ງ. ທຍົ້.*

**30** *ກ. ມາລະໂກ ຫຼື ລູກາ   ຂ. ທີຫຼັງ.*

**31** *"ບໍ່ຕາຍດອກ ແຕ່ຫຼັບຢູ່ເທົ່ານັ້ນ"*

**32** *ກ. ຫຼັບໄປແລ້ວ.   ຂ. ຕາຍ.   ຄ. ເຮັດໃຫ້ຄືນມາຈາກຕາຍ.*

**33** *ຕາຍ...ຄືນ*

**34** *ຄ. ຖືກ*

**35** *ກ. ບໍ່ໃຫ້ບອກຜູ້ໃດຮູ້ເຫດການນີ້   ຂ. ເອົາເຂົາໃຫ້ກິນ*

**36** *ກ. ຄ. ແລະ ງ. ຖືກ (ບໍ່ຕາຍຕົວ)*

**37** *ຍົກ...ຍົກ*

**38** *ກ. ພະຍາດ   ຂ. ດິນຟ້າອາກາດ   ຄ. ຜີ   ງ. ຜິດບາບ   ຈ.ຈາກຕາຍ.*

**39** *ບຸດດາວິດ*

**40** *ກ. ພະຄຼິດ.   ຂ. ພະເມຊີອາ.   ຄ. ຜູ້ທີ່ຮັບການທົດສົງ.*

**ຄຳຕອບ (ຕໍ່):**

**41** *ດາວິດ.*

**42** *ຄ. ຖືກ .*

**43** *ກ. ຍາດ. ຂ. ຟ້າອາກາດ. ຄ. ຜີ. ງ. ຄວາມຜິດບາບ. ຈ. ຕາຍ*

**44** *ຢ່າໃຫ້ຜູ້ໃດຮູ້.*

**45** *ມທ 12:16 ມາລະໂກ 1:44 ມາລະໂກ 7:36*

**46** *ກ. ຖືກກັບຂໍ້ 5. ຂ. ຖືກກັບຂໍ້ 3. ຄ. ຖືກກັບຂໍ້ 2. ງ. ຖືກກັບຂໍ້ 4.*
*ຈ. ຖືກກັບຂໍ້ 1.*

**47** *ກ. ແລະ ຂ. ຖືກ*

**48** *ກ. ພະຄຼິດ (ພະເມຊີອາກໍ່ໄດ້)*
*ຂ. ພະອົງບໍ່ຢາກລໍ້ໃຈຄົນທີ່ຢາກເຫັນແຕ່ສິ່ງທີ່ພາໃຫ້ຕື່ນເຕັ້ນ ແຕ່ບໍ່ຊອກຫາຄວາມຈິງ.*

**49** *ກ. ເພາະມີຜີເຂົາ. ຂ. ໄລ່ຜີອອກດ້ວຍລິດນາຍຜີ.*

**50** *ພະຍາດ. ດິນຟ້າອາກາດ. ພວກຜີ. ຄວາມຜິດບາບ. ຄວາມຕາຍ.*